**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---------------------------

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ: 3573/ກຜງ

ກົມແຜນການ ແລະ ການເງິນ ວັນທີ: 25 OCT 2021

**ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ**

**ໃນການຈັດຊື້ອຸປະກອນເຄື່ອງແລັບສຳລັບກົມປູກຝັງ**

**ກະຊວງກະສິກຳ ແລະ ປ່າໄມ້**

**ເຖິງ: ບໍລິສັດ ສະໜອງອຸປະກອນເຄື່ອງແລັບ ໃນ ສປປ ລາວ.**

1. ໂຄງການຜະລິດກະສິກຳເປັນສິນຄ້າຢູ່ ສປປ ລາວ ໄດ້ຮັບອະນຸມັດງົບປະມານທຶນກູ້ຢືມຈາກທະນາຄານໂລກ ເລກທີ P16 1473 ເພື່ອດຳເນີນການປະມູນຈັດຊື້ເຄື່ອງແລັບ (Lab Equipment) ຂອງຫ້ອງທົດສອບຄຸນນະພາບເມັດພັນເຂົ້າຂອງສູນຂອງກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການ ຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ອຸປະກອນເຄື່ອງແລັບ ໄລຍະເວລາໃນການສົ່ງມອບແມ່ນ 60 ວັນຢ່າງຕໍ່າ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ ມີນາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ວັນທີ 12/11/2021 ທີ່ ຫ້ອງການປະສານງານ ໂຄງການ ຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 10:15 ໂມງ ວັນທີ 12/11/2021 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າກົມ

ຊູຊາດ ໄຊຍະກຸມມານ